ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ແກ້ດ່ວນການແລກປ່ຽນເງິນຕາ ໃຫ້ເຂົ້າສູ່ລະບົບທະນາຄານ



ພາຍຫຼັງທີ່ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຊີ້ແຈງກ່ຽວກັບອັດຕາແລກປ່ຽນ, ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມການເຂົ້າເຖິງແຫຼ່ງທຶນເພື່ອປະກອບສ່ວນແກ້ໄຂບັນຫາຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃນວາລະແຫ່ງຊາດຕໍ່ກອງປະຊຸມສະໄໝວິສາມັນ ຄັ້ງທີ 1 ສະພາແຫ່ງຊາດ ຊຸດທີ IX (ວັນທີ 6 ສິງຫາ 2021) ໂດຍອັດຕາແລກປ່ຽນເປັນສິ່ງທ້າທາຍໜຶ່ງຕໍ່ເສດຖະກິດ ໂດຍສະເພາະໄລຍະເດືອນມິຖຸນາ ແລະ ເດືອນກໍລະກົດຜ່ານມາ ເງິນກີບໄດ້ອ່ອນຄ່າລົງຫຼາຍທຽບກັບເງິນໂດລາ ແລະ ເງິນບາດ ແລະ ມີຄວາມຫ່າງໂຕນກັນຫຼາຍລະຫວ່າງອັດຕາແລກປ່ຽນຂອງທະນາຄານ ແລະ ອັດຕາຕະຫຼາດນອກລະບົບ ໂດຍສະເພາະອັດຕາເງິນກີບທຽບໂດລາ ຊຶ່ງກວ້າງອອກສູງສຸດເຖິງ 22,1% ໃນກາງເດືອນກໍລະກົດ, ຈາກນັ້ນຄ່ອຍໆແຄບລົງມາຢູ່ໃນລະດັບ 15,6% ໃນໄລຍະທ້າຍເດືອນກໍລະກົດ, ສະເລ່ຍ 7 ເດືອນຕົ້ນປີ 2021, ສ່ວນຕ່າງອັດຕາແລກປ່ຽນຂອງທະນາຄານ ແລະ ຂອງຕະຫຼາດນອກລະບົບຢູ່ໃນລະດັບ 9,98% ສໍາລັບອັດຕາກີບທຽບໂດລາ ແລະ 0,52% ສໍາລັບອັດຕາກີບທຽບບາດ.

ສາເຫດຕົ້ນຕໍ ທີ່ພາໃຫ້ເກີດສະພາບດັ່ງກ່າວ ຍ້ອນການແຂງຄ່າຂອງເງິນໂດລາທຽບກັບເງິນສະກຸນຫຼັກອື່ນ ແລະ ການແຂງຄ່າແຮງຂອງເງິນບາດທຽບເງິນໂດລາໃນຕະຫຼາດສາກົນໂດຍລວມເຖິງວ່າໃນໄລຍະທ້າຍເດືອນກໍລະກົດ-ຕົ້ນເດືອນສິງຫາຄ່າເງິນບາດໃນສາກົນໄດ້ອ່ອນຄ່າລົງກໍ່ຕາມ; ຄວາມຕ້ອງການເງິນຕາຕ່າງປະເທດຢູ່ພາຍໃນມີຫຼາຍກວ່າຄວາມສາມາດໃນການສະໜອງເງິນຕາ, ສະພາບການຂາດດຸນດ້ານການຄ້າ-ການບໍລິການ, ພາລະໃນການຊໍາລະດອກເບ້ຍເງິນກູ້ຢືມກັບຕ່າງປະເທດທີ່ຍັງມີຫຼາຍ ແລະ ຕໍ່ເນື່ອງຍາວນານ, ຂະນະທີ່ລາຍຮັບຂອງປະເທດຫຼຸດລົງຫຼາຍຍ້ອນຜົນກະທົບຈາກພະຍາດໂຄວິດ-19; ຄວາມຈໍາເປັນໃນການສະໜອງເງິນຕາຕ່າງປະເທດໃຫ້ແກ່ການນໍາເຂົ້າສິນຄ້າບູລິມະສິດຍັງຢູ່ໃນລະດັບສູງ ແຕ່ສະພາບຄ່ອງດ້ານເງິນຕາຕ່າງປະເທດໃນທົ່ວລະບົບເສດຖະກິດຝືດເຄືອງ, ຄວາມສາມາດໃນການດູດຊຶມຕະຫຼາດເງິນຕາຕ່າງປະເທດຂອງຂະແໜງທະນາຄານກໍ່ຫຼຸດລົງຫຼາຍບໍ່ພຽງພໍກັບຄວາມຕ້ອງການຂອງສັງຄົມທີ່ຍັງມີສູງ; ການຄຸ້ມຄອງເງິນຕາຕ່າງປະເທດຂອງທຸກພາກສ່ວນຍັງບໍ່ທັນກົມກຽວແລະຮັດກຸມເທົ່າທີ່ຄວນ ເຮັດໃຫ້ຍັງມີການເຄື່ອນໄຫວທຸລະ

ກໍາທີ່ຕິດພັນກັບເງິນຕາຕ່າງປະເທດທີ່ບໍ່ສອດຄ່ອງກັບລະບຽບກົດໝາຍຈໍານວນບໍ່ໜ້ອຍ, ໃນນີ້ສະພາບທີ່ຄວາມຕ້ອງການເງິນຕາຕ່າງປະເທດຂອງສັງຄົມມີຫຼາຍກວ່າຄວາມສາມາດໃນການສະໜອງຂອງລະບົບໄດ້ມີຮ້ານແລກປ່ຽນເງິນຕາຈໍານວນໜຶ່ງບໍ່ປະຕິບັດຕາມລະບຽບການ, ມີການກໍານົດອັດຕາແລກປ່ຽນທີ່ບໍ່ສອດຄ່ອງກັບຂອບອັດຕາແລກປ່ຽນທີ່ທາງການກໍານົດໃຫ້.

ຕໍ່ສະພາບການດັ່ງກ່າວ; ໃນຕອນບ່າຍວັນທີ 12 ສິງຫາ 2021, ທຫລ ໄດ້ຈັດຕັ້ງກອງປະຊຸມສະເພາະເຜີຍແຜ່ການປະຕິບັດມາດຕະການໃນການຄຸ້ມຄອງເງິນຕາຕ່າງປະເທດໂດຍຫັນເອົາການຊື້-ຂາຍເງິນຕາຕ່າງປະເທດເຂົ້າສູ່ລະບົບທະນາຄານເຮັດໃຫ້ການຄຸ້ມຄອງເງິນຕາຕ່າງປະເທດມີປະສິດທິຜົນໃຫ້ໄວກວ່າເກົ່າ ຢ່າງຊ້າສຸດບໍ່ໃຫ້ກາຍວັນທີ 31 ສິງຫາ 2021.

ທ່ານນາງ ຂັນແກ້ວ ຫຼ້າມະນີເງົາ ຫົວໜ້າກົມນະໂຍບາຍເງິນຕາ ທຫລ ໄດ້ແຈ້ງວ່າ: ຜ່ານການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຈ້ງການການໂຈະຮັບເອກະສານຄໍາຮ້ອງ ແລະ ການອອກໜັງສືອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາໃນຂອບເຂດທົ່ວປະເທດສະບັບເລກທີ 122/ທກ, ລົງວັນທີ 18 ມິຖຸນາ 2021 ແລະ ແຈ້ງການກ່ຽວກັບການຫັນຮ້ານແລກປ່ຽນເງິນຕາໄປເປັນຮ້ານຕົວແທນຂອງທະນາຄານທຸລະກິດ (ທທກ) ໃນການດໍາເນີນທຸລະກິດແລກປ່ຽນເງິນຕາສະບັບເລກທີ 758/ກນງ, ລົງວັນທີ 12 ກໍລະກົດ 2021 ແລະ ຄໍາແນະນໍາກ່ຽວຂ້ອງເຫັນວ່າ: ການຫັນຮ້ານແລກປ່ຽນເງິນຕາທີ່ໄດ້ຮັບອະນຸຍາດໄປເປັນຕົວແທນຂອງ ທທກ ຍັງຊັກຊ້າ, ບໍ່ທັນກັບສະພາບຄວາມຮຽກຮ້ອງຕ້ອງການຂອງວຽກງານ.

ດັ່ງນັ້ນ; ທຫລ ຈຶ່ງອອກແຈ້ງການສະບັບເລກທີ 111 /ທຫລ, ວັນທີ 12 ສິງຫາ 2021ໂດຍໃຫ້ບັນດາ ທທກ, ຮ້ານແລກປ່ຽນເງິນຕາ ແລະ ບຸກຄົນ-ນິຕິບຸກຄົນທີ່ກ່ຽວຂ້ອງຮັບຮູ້ ແລະ ຈັດຕັ້ງປະຕິບັດໃຫ້ເປັນຈິງເພາະແມ່ນຄວາມຈໍາເປັນຮີບດ່ວນຕ້ອງຈັດຕັ້ງປະຕິບັດໃຫ້ສໍາເລັດໂດຍໄວເພື່ອຫັນເອົາການຊື້-ຂາຍເງິນຕາຕ່າງປະເທດເຂົ້າສູ່ລະບົບທະນາຄານຫຼາຍຂຶ້ນເຮັດໃຫ້ການຄຸ້ມຄອງເງິນຕາຕ່າງປະເທດມີປະສິດທິຜົນສາມາດປະກອບສ່ວນເຂົ້າໃນການພັດທະນາ ແລະ ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ເງິນຕາໄດ້ດີແລະທັນສະພາບກວ່າເກົ່າ. ສະນັ້ນ, ໃຫ້ບັນດາຮ້ານແລກປ່ຽນເງິນຕາທີ່ໄດ້ຮັບອະນຸຍາດຈາກ ທຫລ ສືບຕໍ່ເປັນເຈົ້າການຮີບຮ້ອນປະສານສົມທົບກັບ ທທກ,ໃຫ້ ທທກ ເພີ່ມທະວີຄວາມເອົາໃຈໃສ່ໃນການພິຈາລະນາຄັດເລືອກຮ້ານແລກປ່ຽນເງິນຕາ ທີ່ຈະເປັນຕົວແທນຂອງຕົນ ແລະ ດໍາເນີນການເຊັນສັນຍາໃຫ້ສໍາເລັດພາຍໃນວັນທີ 31 ສິງຫາ 2021; ຕໍ່ກັບກໍລະນີທີ່ໄດ້ສະເໜີຂໍອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາກ່ອນອອກແຈ້ງການ ສະບັບເລກທີ 122/ທກ, ລົງວັນທີ 18 ມິຖຸນາ 2021 ແຕ່ຍັງບໍ່ໄດ້ຮັບໃບອະນຸຍາດດໍາເນີນທຸລະກິດນັ້ນ, ທຫລ ຈະບໍ່ສືບຕໍ່ພິຈາລະນາອີກ.

ນອກຈາກການເຜີຍແຜ່-ແນະນໍາແຈ້ງການນີ້ແລ້ວ, ທີ່ປະຊຸມຍັງໄດ້ມີການປຶກສາຫາລື, ແລກປ່ຽນຄໍາເຫັນ ແລະ ຖາມ-ຕອບບັນຫາຕ່າງໆຕິດພັນກັບວິທີການຈັດຕັ້ງປະຕິບັດຕົວຈິງຕື່ມອີກ. ສໍາລັບແຈ້ງການສະບັບນີ້ແມ່ນໃຫ້ທະນາຄານທຸລະກິດລັດ, ທະນາຄານທຸລະກິດຮ່ວມທຶນ, ທະນາຄານທຸລະກິດເອກະຊົນ, ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ, ຮ້ານແລກປ່ຽນເງິນຕາ ແລະ ທຸກພາກສ່ວນກ່ຽວຂ້ອງ ປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ. ເນື້ອໃນແຈ້ງການ ແລະ ຄໍາແນະນໍາທີ່ບໍ່ສອດຄ່ອງກັບແຈ້ງການສະບັບນີ້ລ້ວນແຕ່ຖືກຍົກເລີກ.

**# ຂ່າວ: ຣັດສະໝີ ດວງສັດຈະ**

# ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ